# ມິຊຊາສຳລັບຜູ້ລ່ວງລັບ



**ພຣະວໍລະສານໂດຍນັກບຸນມັກໂກ 10, 17-22**

ໃນເວລານັ້ນ ເມື່ອພຣະເຢຊູເຈົ້າກຳລັງເດີນທາງໄປກໍມີຄົນຜູ້ໜຶ່ງແລ່ນມາຫາ ຂາບລົງຕໍ່ໜ້າພຣະອົງທູນວ່າ: ພຣະອາຈານຜູ້ດີ, ຂ້ານ້ອຍຈະຕ້ອງເຮັດແນວໃດເພື່ອຈະໄດ້ຮັບສ່ວນໃນຊີວິດນິລັນດອນ? ພຣະເຢຊູເຈົ້າຕອບວ່າ: ເປັນຫຍັງເຈົ້າຈຶ່ງເອີ້ນເຮົາເປັນຜູ້ດີ. ບໍ່ມີໃຜດີນອກຈາກພຣະເຈົ້າແຕ່ຜູ້ດຽວ. ເຈົ້າກໍຮູ້ຈັກພຣະບັນຍັດດີຄື: ຢ່າຂ້າຄົນ, ຢ່າລ່ວງປະເວນີ, ຢ່າລັກຂະໂມຍ, ຢ່າໃສ່ຄວາມເຂົາ, ຢ່າທຳຮ້າຍຜູ້ໃດ, ຈົ່ງນັບຖືບິດາມານດາຂອງເຈົ້າ. ຄົນຜູ້ນັ້ນຕອບວ່າ: ພຣະອາຈານ ທຸກສິ່ງເຫລົ່ານີ້ ຂ້ານ້ອຍໄດ້ຖືມາແຕ່ເວລາຍັງໜຸ່ມນ້ອຍແລ້ວ.

ພຣະເຢຊູເຈົ້າຈຶ່ງຈ້ອງຕາແນມເບິ່ງຄົນນັ້ນ ແລະມີຄວາມຮັກແພງເຂົາ. ພຣະອົງກ່າວກັບເຂົາວ່າ: ເຈົ້າຍັງຂາດແນວໜຶ່ງ ຄືໃຫ້ເມືອຂາຍສັບສົມບັດຂອງເຈົ້າແລະເອົາໄປທານຄົນທຸກຈົນ ແລ້ວເຈົ້າຈະມີສັບຢູ່ສະຫວັນ. ຕໍ່ໄປໃຫ້ເຈົ້າມານຳເຮົາ. ພໍໄດ້ຍິນຄວາມນີ້, ຄົນຜູ້ນັ້ນກໍມີຄວາມເສຍໃຈແລະຫລົບເມືອຢ່າງໂສກເສົ້າ. ຍ້ອນວ່າເຂົາເປັນຄົນຮັ່ງມີຫລາຍ.

*ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ*

**ບົດແບ່ງປັນ: ມກ 10, 17-22**

ຍິ່ງມະນຸດມີທຸກສິ່ງທຸກຢ່າງໃນຊີວິດ: ຄວາມຮັ່ງມີ, ຄວາມສະດວກສະບາຍ, ຄວາມສຸກທາງກາຍໃຈ, ຍິ່ງມະນຸດມີຄວາມຮູ້ສຶກວ່າງເປົ່າແລະຂາດເຂີນສິ່ງໃດສິ່ງໜຶ່ງໃນຊີວິດຝ່າຍຈິດ. ຍ້ອນບໍ່ມີສິ່ງໃດໃນໂລກສາມາດຕື່ມເຕັມໃຫ້ມະນຸດສິ່ງທີ່ຂາດຫາຍໄປໃນຊີວິດວິນຍານຂອງເຂົາໄດ້, ນອກຈາກພຣະເຈົ້າ. ເພາະມະນຸດບໍ່ໄດ້ມີຊີວິດພຽງແຕ່ດ້ານຮ່າງກາຍເທົ່ານັ້ນ, ແຕ່ຍັງມີຊີວິດຝ່າຍວິນຍານອີກດ້ວຍ. ແລະອີກຢ່າງວັດຖຸສິ່ງຂອງທີ່ສາມາດຫລໍ່ລ້ຽງແລະຕອບສະໜອງໃຫ້ຮ່າງກາຍ ບໍ່ສາມາດຫລໍ່ລ້ຽງຝ່າຍວິນຍານໄດ້. ເພາະສະນັ້ນມະນຸດຈຶ່ງຕ້ອງການຄວາມຮັ່ງມີຝ່າຍວິນຍານ ນັ້ນຄືຊີວິດກັບພຣະເຈົ້າ, ຊີວິດນິລັນດອນ.

ໃນວັນນີ້, ພຣະວໍລະສານຈຶ່ງຍົກໃຫ້ພວກເຮົາເຫັນມີຊາຍໜຸ່ມຮັ່ງມີຜູ້ໜຶ່ງມາຖາມພຣະເຢຊູເຈົ້າວ່າ: ພຣະອາຈານຜູ້ດີເອີຍ, ຂ້ານ້ອຍຕ້ອງເຮັດແນວໃດຈຶ່ງຈະມີຊີວິດນິລັນດອນ? ຊາຍໜຸ່ມຜູ້ນີ້ເປັນຄົນມີຄົບທຸກສິ່ງຢ່າງໃນຊີວິດບົນໂລກນີ້ແລ້ວ. ເພິ່ນຢາກໃຫ້ຄວາມສະໜຸກສະບາຍນີ້ສືບຕໍ່ໃນໂລກໜ້າ. ເພິ່ນຈຶ່ງຕັ້ງຄຳຖາມເພື່ອຖາມພຣະເຢຊູເຈົ້າເລື່ອງຊີວິດນິລັນດອນ. ແລະຊາຍໜຸ່ມຜູ້ນີ້ເອງກໍເປັນຄົນສັດທາ, ປະຕິບັດຕາມພະບັນຍັດຂອງພຣະເຈົ້າທຸກປະການຕັ້ງແຕ່ຍັງນ້ອຍ. ແຕ່ພຣະເຢຊູເຈົ້າຕອບຊາຍໜຸ່ມຜູ້ນີ້ວ່າມີສິ່ງໜຶ່ງທີ່ເຈົ້າຍັງຂາດຄືໃຫ້ເຈົ້າແບ່ງປັນສິ່ງທີ່ເຈົ້າມີໃຫ້ກັບຄົນອື່ນ ແລ້ວຕິດຕາມເຮົາມາ. ໝາຍຄວາມວ່າ: ສິ່ງທີ່ເຈົ້າຍັງປະຕິບັດບໍ່ໄດ້ນັ້ນແມ່ນຄວາມຮັກແພງຕໍ່ເພື່ອນມະນຸດ ແລະຮັກແພງຕໍ່ພຣະເປັນເຈົ້າ. ເພາະພະເຈົ້າເປັນອົງແຫ່ງຄວາມຮັກ. ຖ້າພວກເຮົາບໍ່ມີຄວາມຮັກຢູ່ໃນໃຈ ເຖິງແມ່ນວ່າພວກເຮົາຈະປະຕິບັດພະບັນຍັດທຸກປະການ ພວກເຮົາກໍບໍ່ສາມາດໄດ້ຮັບຄວາມຮອດ ເພາະພວກເຮົາຍັງບໍ່ມີພະເຈົ້າຢູ່ໃນໃຈ. ຍ້ອນພະເຢຊູເຈົ້າກ່າວວ່າ: ຄົນທັງຫລາຍຈະຮູ້ຈັກວ່າພວກເຈົ້າເປັນສິດຂອງເຮົາ ຖ້າພວກເຈົ້າຮັກກັນແລະກັນຄືເຮົາໄດ້ຮັກພວກເຈົ້າ.

ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ